ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ /ກສ
ນະຄອນຫຼວງວຽງຈັນ, ວັນທີ ພຶດສະພາ 2022

ບົດລາຍງານ

ການເຂົ້າຮ່ວມງານມະຫາກຳກິລາຊີເກມ ຄັ້ງທີ 31 ທີ່ປະເທດ ສສ ຫວຽດນາມ
ແຕ່ວັນທີ 12-23 ພຶດສະພາ 2022

ຮຽນ : ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ທີ່ເຄົາລົບຢ່າງສູງ,
ເລື່ອງ : ການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 31 ທີ່ປະເທດ ສສ ຫວຽດນາມ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍການອະນຸມັດໃຫ້ຄະນະນັກກິລາ ລາວກະກຽມ ແລະ ເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 31 ປີ 2022 ທີ່ ສ.ສ ຫວຽດນາມ ສະບັບເລກທີ 176/ຫສນຍ, ລົງວັນທີ 11 ກຸມພາ 2022.

ກົມກິລາລະດັບສູງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຊາບວ່າ: ການເຂົ້າຮ່ວມງານມະຫາກຳກິລາຊີເກມ ແມ່ນງານກິລາໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ ມີທັງໝົດ 11 ປະເທດເຂົ້າຮ່ວມ. ຊຶ່ງມີກຳນົດ 2 ປີໃດໄດ້ຈັດຂຶ້ນເທື່ອໜຶ່ງໂດຍປະເທດສະມາຊິກຜັດປ່ຽນກັນເປັນເຈົ້າພາບ. ຊີເກມ ຄັ້ງທີ 30 ທີ່ຜ່ານມາ ໄດ້ຈັດຂຶ້ນຢູ່ປະເທດຟີລິບປິນ ໃນປີ 2019, ສປປ ລາວ ສົ່ງນັກກິລາເຂົ້າແຂ່ງຂັນທັງໝົດ 28 ປະເພດກິລາ ມີຈຳນວນພົນທັງໝົດ 345 ຄົນ ໄດ້ຮັບຜົນສຳເລັດ ຍາດໄດ້ຫຼຽນຄຳ 01 ຫຼຽນ, ຫຼຽນເງິນ 05 ຫຼຽນ ແລະ ຫຼຽນທອງ 27 ຫຼຽນ ລວມທັງໝົດ 33 ຫຼຽນ ແລະ ຈັດຢູ່ໃນອັນດັບທີ 10/11 ປະເທດ. ກິລາຊີເກມ ຄັ້ງທີ 31 ໄດ້ກຳນົດຈັດຂຶ້ນໃນປີ 2021 ທີ່ ສສ ຫວຽດນາມ, ແຕ່ຍ້ອນເຊື້ອພະຍາດໂຄວິດ-19 ຍັງສືບຕໍ່ແຜ່ລະບາດຢ່າງຮ້າຍແຮງຢູ່ໃນທົ່ວໂລກ, ງານກິລາດັ່ງກ່າວຈຶ່ງໄດ້ຍ້າຍມາຈັດໃສ່ ວັນທີ 12-23 ພຶດສະພາ 2022, ມີ 11 ປະເທດເຂົ້າຮ່ວມ.

1. ສະພາບການກະກຽມເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 31 ຂອງທັບນັກກິລາລາວ :

- ກົມກິລາລະດັບສູງ ໄດ້ປະສານສົມທົບກັບ ຄະນະກຳມະການໂອແລມປິກແຫ່ງຊາດລາວ ແລະ ບັນດາສະຫະພັນກິລາແຫ່ງຊາດລາວ ປະເພດຕ່າງໆ ຄົ້ນຄວ້າຄັດເລືອກເອົາປະເພດກິລາທີ່ມີຄວາມສາມາດ ແລະ ຄວາມພ້ອມຮອບດ້ານ ຈຳນວນ 30 ປະເພດກິລາ, ມີຈຳນວນພົນທັງໝົດ 507 ຄົນ ເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 31 ທີ່ປະເທດ ສສ ຫວຽດນາມ ໂດຍໄດ້ແຍກເປັນ 02 ໝວດຄື :

Scanned with CamScanner

1.1 ຄະນະນຳກະຊວງສຶກສາທິການ ແລະ ກີລາ ແລະ ຜູ້ຕິດຕາມ ຈຳນວນ 06 ທ່ານ;

1.2 ຄະນະມົນຕີຊີເກມ ແລະ ບັນດາກຳມາທິການກີລາຊີເກມ ຈຳນວນ 05 ທ່ານ;

1.3 ຄະນະນຳນັກກີລາ, ກອງເລຂາ ແລະ ແພດ ຈຳນວນ 16 ທ່ານ;

1.4 ໝວດປະເພດກີລາທີ່ນຳໃຊ້ງົບປະມານຂອງລັດຖະບານ ມີ 18 ປະເພດ, ມີຈຳນວນພົນ 235 ຄົນ ຄື: 1. ເປຕັງ, 2. ບີລຽດ-ສະນຸກເດີ້, 3. ຄິກບອກຊິງ, 4. ມວຍລາວ, 5. ວຸຊູ, 6. ລົດຖີບ, 7. ເທຄວັນໂດ, 8. ມວຍສາກົນ, 9. ກະຕໍ້, 10. ປັນຈັກສີລັດ, 11. ກາຣາເຕໂດ, 12. ຢູໂດ, 13. ມວຍປ້ຳ, 14. ຍິງທະນູ, 15. ແລ່ນ-ລານ, 16. ຍົກນ້ຳໜັກ, 17. ໂວວິນາມ ແລະ 18. ລອຍນ້ຳ;

1.5 ໝວດກີລາທີ່ກຸ້ມຕົນເອງດ້ານງົບປະມານຮັບໃຊ້ ມີ 10 ປະເພດ, ມີຈຳນວນພົນ 184 ຄົນ ຄື: 1. ບານເຕະ (ຊາຍ-ຍິງ), 2. ດອກປົກໄກ່, 3. ເທັນນິດ, 4. ບານສົ່ງຫາດຊາຍ (ຊາຍ), 5. ກອຟ, 6. ຍິມນາສະຕິກ, 7. ອິສະປອດ, 8. ຍິງປືນ, 9. ປົ່ງປ່ອງ ແລະ 10. ເພາະກາຍ;

1.6 ເຂົ້າຮ່ວມນອກແຜນ ຮັບຜິດຊອບກຸ້ມຕົນເອງຮອບດ້ານ ໃນນາມແຂກໂອແລມປິກ ໂດຍມີບັນດາຄະນະ ບໍລິຫານງານສະຫະພັນກີລາແຫ່ງຊາດ ແລະ ຜູ້ອຸປະຖຳ ຈຳນວນ 61 ທ່ານ.

2. ຜົນສຳເລັດຂອງການເຂົ້າຮ່ວມແຂ່ງຂັນກີລາຊີເກມ ຄັ້ງທີ 31 ຂອງທັບນັກກີລາລາວ :

- ຜ່ານການເຂົ້າຮ່ວມແຂ່ງຂັນຄັ້ງນີ້ ນັກກີລາທີມຊາດລາວ ສາມາດຍາດໄດ້ຫຼຽນຕ່າງໆທັງໝົດ 42 ຫຼຽນ ຄື : ຫຼຽນຄຳ 02 ຫຼຽນ, ຫຼຽນເງິນ 07 ຫຼຽນ ແລະ ຫຼຽນທອງ 33 ຫຼຽນ ດັ່ງຕາຕະລາງສະຫຼຸບຫຼຽນລຸ່ມນີ້ :

ລ/ດ	ປະເພດກີລາ	ຫຼຽນຄຳ	ຫຼຽນເງິນ	ຫຼຽນທອງ	ລວມ	ໝາຍເຫດ
1	ໂວວິນາມ	2	1	3	6	
2	ເປຕັງ		2	4	6	
3	ຢູໂດ		2	2	4	
4	ກະຕໍ້		1	1	2	
5	ກາຣາເຕໂດ		1		1	
6	ເທຄວັນໂດ			4	4	
7	ມວຍລາວ			4	4	
8	ວຸຊູ			3	3	
9	ປັນຈັກສີລັດ			3	3	
10	ຄິກບອກຊິງ			2	2	
11	ມວຍປ້ຳ			2	2	
12	ຍິງປືນ			2	2	
13	ເພາະກາຍ			1	1	
14	ເທັນນິດ			1	1	
15	ມວຍສາກົນ			1	1	
	ລວມ	**2**	**7**	**33**	**42**	

Scanned with CamScanner

ການເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 31 ຂອງທັບນັກກິລາລາວຊຸດນີ້ ຕີລາຄາໄດ້ວ່າ ດີກວ່າຄັ້ງທີ 30 ປີ 2019 ຢູ່ປະເທດຟີລິບປິນ. ເຖິງແມ່ນວ່າງານກິລາຊີເກມຄັ້ງນີ້ຈະຖືກກັບໄລຍະທີ່ພັກ ແລະ ລັດຖະບານພົບຄວາມຫຍຸ້ງຍາກທາງດ້ານງົບປະມານຮັບໃຊ້ຍ້ອນພະຍາດ ໂຄວິດ-19 ຍັງແຜ່ລະບາດຢ່າງຮ້າຍແຮງຢູ່ໃນທົ່ວປະເທດກໍຄືທົ່ວໂລກ ເປັນສາເຫດເຮັດໃຫ້ການກະກຽມນັກກິລາບໍ່ໄດ້ຕາມແຜນການທີ່ວາງໄວ້ຍ້ອນງົບປະມານບໍ່ພຽງພໍ, ການຝຶກແອບຍົກລະດັບນັກກິລາໃຊ້ເວລາສັ້ນພຽງແຕ່ 02 ເດືອນ, ແຕ່ຄູຝຶກ ແລະ ນັກກິລາທີມຊາດລາວໄດ້ເປັນເຈົ້າການຍາດໄດ້ຫຼຽນຄຳ, ຫຼຽນເງິນ, ຫຼຽນທອງ ເພີ່ມຂຶ້ນ ແລະ ໄດ້ຈັດຢູ່ອັນດັບທີ 9 ໃນຈຳນວນ 11 ປະເທດເຂົ້າຮ່ວມ.

3. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີ :

3.1 ຂໍ້ສະດວກ :

- ຍ້ອນໄດ້ຮັບການຊີ້ນຳຈາກການນຳຂັ້ນສູງ, ພັກ-ລັດ ແລະ ການນຳກະຊວງສຶກສາທິການ ແລະ ກິລາ, ຄະນະກຳມະການໂອລຳປິກແຫ່ງຊາດລາວ, ບັນດາສະຫະພັນກິລາແຫ່ງຊາດລາວ ແລະ ຄະນະຮັບຜິດຊອບແຕ່ລະຂັ້ນ ເຮັດໃຫ້ຄະນະນຳ, ຄູຝຶກ ແລະ ນັກກິລາ ມີຈິດໃຈຊາດສູງສົ່ງ ໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນກິລາຊີເກມ ຄັ້ງທີ 31 ໄດ້ຮັບຜົນສຳເລັດເປັນຢ່າງດີ, ສາມາດຍາດໄດ້ຫຼຽນຕ່າງໆ ແລະ ໄດ້ສ້າງກຽດຊື່ສຽງມາໃຫ້ແກ່ປະເທດຊາດ;
- ລັດຖະບານໄດ້ສະໜອງງົບປະມານຮັບໃຊ້ໃຫ້ແກ່ຄະນະກິລາລາວ ເພື່ອກະກຽມເຂົ້າຮ່ວມງານແຂ່ງຂັນກິລາຊີເກມ ຄັ້ງທີ 31 ທັນຕາມກຳນົດເວລາ;
- ໄດ້ມີການປະສານງານຮ່ວມມືກັບປະເທດເຈົ້າພາບ ແລະ ພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກ ໃຫ້ແກ່ຄະນະກິລາລາວ ເຂົ້າຮ່ວມການແຂ່ງຂັນເກມຄັ້ງນີ້ ເປັນຢ່າງດີ;
- ໄດ້ຮັບການສະໜັບສະໜຸນຈາກພາກສ່ວນບໍລິສັດ, ຫ້າງຮ້ານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຮັດໃຫ້ນັກກິລາມີກຳລັງໃຈ ໃນການແຂ່ງຂັນກິລາໃນຄັ້ງນີ້.

3.2 ຂໍ້ຫຍຸ້ງຍາກ :

- ການຝຶກແອບຍົກລະດັບນັກກິລາຢູ່ສູນຝຶກແຫ່ງຕ່າງໆ ພົບຄວາມຫຍຸ້ງຍາກຍ້ອນພະຍາດ ໂຄວິດ-19 ຍັງແຜ່ລະບາດຢູ່ໃນທົ່ວໂລກ, ເຮັດໃຫ້ນັກກິລາຈຳນວນໜຶ່ງຕິດເຊື້ອ ແລະ ໄດ້ຢຸດເຊົາການຝຶກແອບກິລາ ເພື່ອໃຊ້ເວລາກັກຕົວ ແລະ ປິ່ນປົວ;
- ການເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງນີ້ ປະເທດເຈົ້າພາບໄດ້ຈັດຂຶ້ນຫຼາຍຈຸດ ທີ່ມີໄລຍະຫ່າງກັນ, ບາງປະເພດກິລາແມ່ນຈັດຢູ່ຕ່າງແຂວງ ເຮັດໃຫ້ການຊຸກຍູ້ລົງຕິດຕາມການແຂ່ງຂັນພົບຄວາມຫຍຸ້ງຍາກ;
- ການປະສານງານລະຫວ່າງ ຄະນະຮັບຜິດຊອບທີ່ພັກຂອງປະເທດເຈົ້າພາບ ກັບໂຮງແຮມທີ່ເອົານັກກິລາໄປພັກເຊົາ ເຮັດໃຫ້ມີບັນຫາເວລາແຈ້ງເຂົ້າ ແລະ ແຈ້ງອອກໂຮງແຮມ ຂອງກິລາປະເພດຕ່າງໆ;
- ການເດີນທາງເຂົ້າຮ່ວມການແຂ່ງຂັນໃນຄັ້ງນີ້ ພົບຄວາມຫຍຸ້ງຍາກ ຍ້ອນວ່າສາຍການບິນລະຫວ່າງປະເທດມີຈຳນວນຖ້ຽວບິນໜ້ອຍ ເຮັດໃຫ້ບາງປະເພດກິລາຕ້ອງໄປກ່ອນ ແລະ ກັບຊ້າກ່ອນກຳນົດ, ຕ້ອງໄດ້ເສຍຄ່າອາຫານ ແລະ ທີ່ພັກເພີ່ມ;

  ການສະໜອງຂໍ້ມູນແບບຟອມລົງທະບຽນ ຂອງບາງຄະນະສະຫະພັນຍັງຊັກຊ້າ ແລະ ບໍ່ຖືກຕາມລະບຽບທີ່ກຳນົດໄວ້;

Scanned with CamScanner

- ບາງສະຫະພັນມີນັກກິລາໄປໜ້ອຍ ແຕ່ຄະນະນັກກິລາໄປຫຼາຍເກີນໂຄຕາ ຂອງລະບຽບທີ່ກຳນົດໄວ້ ເຮັດໃຫ້ການເຮັດວຽກຂອງກອງເລຂາ ມີຄວາມສັບສົນ;

3.3 ບົດຮຽນທີ່ຖອດຖອນໄດ້ :

- ເພີ່ມທະວີການຊີ້ນຳ-ນຳພາ ທາງດ້ານແນວຄິດການເມືອງ ໃຫ້ແກ່ຄະນະນຳ, ຄູຝຶກ ແລະ ນັກກິລາ ຢ່າງໜັກແໜ້ນ ແລະ ເປັນປົກກະຕິ;
- ສະຫະພັນກິລາແຕ່ງຊາດ ຕ້ອງເປັນເຈົ້າການໃນການຄັດເລືອກ ແລະ ຊອກຫາຕົວນັກກິລາທີ່ມີພອນສະຫວັນ, ມີຄວາມສາມາດສູງ ເພື່ອເຂົ້າສູນຝຶກແອບ ແລະ ເຂົ້າຮ່ວມການແຂ່ງຂັນ;
- ຕ້ອງນຳໃຊ້ວິທະຍາສາດການກິລາເຂົ້າຊ່ວຍໃນການພັດທະນາກິລາລະດັບສູງ;
- ສະໜອງງົບປະມານໃຫ້ແກ່ການພັດທະນາກິລາລະດັບສູງ ກໍຄືນັກກິລາທີມຊາດ ເພື່ອເຂົ້າຮ່ວມການແຂ່ງຂັນກິລາສາກົນໃນລະດັບຕ່າງໆ ໃຫ້ພຽງພໍ ແລະ ທ່ວງທັນຕາມຄວາມຮຽກຮ້ອງຕ້ອງການ;
- ບາງປະເພດກິລາເປົ້າໝາຍຫຼຽນຄຳ ມີຄວາມຈຳເປັນຕ້ອງໃຫ້ຈ້າງຄູຝຶກລະດັບຊ່ຽວຊານ ຈາກຕ່າງປະເທດ ມາຮັບຜິດຊອບການຝຶກແອບໃຫ້ນັກກິລາ ແລະ ສົ່ງຄູຝຶກ ແລະ ນັກກິລາ ໄປແຂ່ງຂັນທົດສອບ ແລະ ເກັບໂຕຢູ່ຕ່າງປະເທດ.

3.4 ຂໍ້ສະເໜີ :

- ເພື່ອກະກຽມສະຫຼຸບຍ້ອງຍໍຜົນສຳເລັດຂອງຄະນະກິລາລາວ ໃນການເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 31 ທີ່ປະເທດ ສສ ຫວຽດນາມ ໂດຍສະເພາະຄະນະນຳ, ຄູຝຶກ ແລະ ນັກກິລາ ທີ່ຍາດໄດ້ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ ມີຜົນງານດີເດັ່ນໃນການສ້າງກຽດຊື່ສຽງໃຫ້ແກ່ປະເທດຊາດ, ກົມກິລາລະດັບສູງ ຈຶ່ງຮຽນສະ ເໜີມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດພິທີດັ່ງກ່າວ ໃຫ້ຖືກຕ້ອງ ແລະ ເໝາະສົມ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະກິລາ ເພື່ອຮັບຊາບ ແລະ ຂໍທິດຊີ້ນຳດ້ວຍ.

ຫົວໜ້າກົມ

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ /ກສ
ນະຄອນຫຼວງວຽງຈັນ, ວັນທີ 31 ພຶດສະພາ 2022

ສະຫຼຸບຫຼຽນການແຂ່ງຂັນກິລາຊີເກມ ຄັ້ງທີ 31 ປີ 2022
ທີ່ ສສ ຫວຽດນາມ ແຕ່ວັນທີ 12-23/05/2022

2021 Southeast Asian Games medal table[50]					
Rank	Nation	Gold	Silver	Bronze	Total
1	Vietnam*	205	125	116	446
2	Thailand	92	103	137	332
3	Indonesia	69	91	81	241
4	Philippines	52	70	105	227
5	Singapore	47	46	73	166
6	Malaysia	39	45	90	174
7	Myanmar	9	18	35	62
8	Cambodia	9	13	41	63
9	Laos	2	7	33	42
10	Brunei	1	1	1	3
11	Timor-Leste	0	3	2	5
Totals (11 nations)		525	522	714	1761

ຫົວໜ້າກົມ

ຫົວໜ້າພະແນກພັດທະນາກິລາ

Scanned with CamScanner

ສະຫຼຸບຫຼຽນລາງວັນ
ໃນການເຂົ້າຮ່ວມການແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 31
ທີ່ ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ ເປັນເຈົ້າພາບ

ວັນທີ 12-23 ພຶດສະພາ 2022

ລ/ດ	ປະເພດກິລາ	ຫຼຽນລາງວັນ			ເພດ	ລາຍການແຂ່ງຂັນ	ຊື່ ແລະ ນາມສະກຸນ	ວັນທີແຂ່ງຂັນ
		ຄຳ	ເງິນ	ທອງ				
1	ຫວໍວິນາມ Vovonam	1			ຍິງ	Female couple weapon practice: Pair aword form	ນາງ ມາລາ ຈັນທະລັກສາ	19/05/2022
							ນາງ ພິກສະໄໝ ອິນສຸມັງ	
		1			ຊາຍ	Male single weapon practice: Four - element staff form	ທ້າວ ໄພລັດ ທຳມະວົງສາ	21/05/2022
			1		ຊາຍ	Vovinam-Men's 60kg	ທ້າວ ແສງສຸລິ ຈັນທະປັນຍາ	19/05/2022
				1	ຍິງ-ຊາຍ	Vovinam-Female multiple weapon practice: 1 female defense against 3 others with weapon	ທ້າວ ພຸດທະລິນ ພຽງປັນຍາ	18/05/2022
							ນາງ ພິກສະໄໝ ອິນສຸມັງ	
							ທ້າວ ໂພຄຳ ພົມມະຈັນ	
							ທ້າວ ໄຊຊະນະ ຮ່ວງລໍຄຳ	
				1	ຊາຍ	Vovinam-Male leg - attack technique: 04 males, each performs 2 legs attack techniques	ທ້າວ ໂພຄຳ ພົມມະຈັນ	22/05/2022
							ທ້າວ ສິມໝາຍ ພັກນິວົງ	
							ທ້າວ ໄພລາວັນ ຈັນທະກາລີ	
							ທ້າວ ໄຊຊະນະ ຮ່ວງລໍຄຳ	
				1	ຍິງ	Vovinam-Female couple hand practice: Dual form	ນາງ ກຸງກົ້ງ ບຸດດາໄຊ	18/05/2022
							ນາງ ມາລາ ຈັນທະລັກສາ	
2	ເປຕັ້ງ Petanque		1			Petanque-Women's Shooting	ນ. ໂນວິລັກ ເທບພະກັນ	13/05/2022
			1		ຍິງ-ຊາຍ	Petanque-Triples 2 Women 1 Man	ນາງ ມະນີວັນ ສຸລິຍາ	17/05/2022
							ນາງ ຈັນສະໝອນ ວົງສະຫວັດ	
							ທ້າວ ອານຸລັກ ແອວມະນີ	
				1	ຊາຍ	Petanque-Men's Doubles	ທ້າວ ວິລະສັກ ລາດສະວົງ	15/05/2022
							ທ້າວ ບຸນຕາມີ ສຸທຳມະວົງ	
				1	ຍິງ	Petanque-Women's Doubles	ນາງ ນ້ອຍ ມານີທອນ	15/05/2022
							ນາງ ນິນນີ ພັນທະລີ	

Scanned with CamScanner

	ເປຕ້ງ Petanque			1	ຊາຍ	Petanque-Men's Triples	ທ້າວ ຄຳຟັນ ແສງແກ້ວ ທ້າວ ຫລ້າ ໜຽນມະນີ ທ້າວ ໂຊກອານັນ ຟອງສານຸວົງ ທ້າວ ພຸດທະລາ ແກ້ວກັນນິກາ	19/05/2022
				1	ຍິງ	Petanque-Women's Triples	ນາງ ນິດາວັນ ດວງມານີຈັນ ນາງ ຄຸນ ສຸກສະຫວັດ ນາງ ອາລີ ແສງຈັນເພັດ ນາງ ອັດສະນີ ດາລາວັນ	
3	ຢຸໂດ Judo		1		ຍິງ	Judo-Women's Katame No Kata	ນາງ ພອນວັນ ສີອຳພອນ ນາງ ວຽງໄຊ ວິໄລພອນ	18/05/2022
			1		ຊາຍ	Judo-Men's -60kg	ທ້າວ ສຸກພະໄຊ ສິດທິສານ	20/05/2022
				1	ຊາຍ	Judo-Men's Kodokan Goshin Jutsu	ທ້າວ ວຽງວິໄລ ຈັນສີ ທ້າວ ຈິດຕາວອນ ສີວັນວິໄລ	18/05/2022
				1		Judo-Men's -55kg	ທ້າວ ຈັນທະພອນ ຄຳພຸມາວົງ	21/05/2022
4	ກະຕໍ Sepak takraw		1		ຍິງ	Sepaktakraw-Women's Doubles	ນາງ ໜໍ່ຄຳ ວົງໄຊ ນາງ ກ້ອຍ ໄຊຍະວົງ	19/05/2022
				1	ຍິງ	Sepaktakraw-Women's Quard	ນາງ ໜໍ່ຄຳ ວົງໄຊ ນາງ ກ້ອຍ ໄຊຍະວົງ ນາງ ນວນດຳ ວໍລະບຸດ ນາງ ສອນສະຫວັນ ແກ້ວສຸລິຍາ	21/05/2022
5	ກາຣາເຕໂດ Karatedo		1		ຊາຍ	Karate - Men's - 84kg Kumite	ທ້າວ ທອ່ດນ້ີ ພົງສຳພັນ	19/05/2022
6	ເທຄວັນໂດ Teakwondo			1	ປະສົມ	Taekwondo-Mixed Freestyle Poomsae	ນາງ ລັກກີ ແສງມະນີ ທ້າວ ລາດທະຈັກ ພິລາວັນ ທ້າວ ສຸລາສັກ ສີປັນຍາ ທ້າວ ອາເຊີນ ລາດວົງໄຊ ທ້າວ ກິລາດາວອນ ພິລາວົງ	16/05/2022
				1	ຍິງ	Taekwondo-Women's Team Recognized Poomsae	ນາງ ຍິດທິດາ ເຄນໂພຄຳ ນາງ ມີໃຈ ວົງສາ ນາງ ບົວສະຫວັນ ພົງສະຫວັດ	16/05/2022
				1	ຊາຍ	Taekwondo-Kyorugi For Male Under 58kg	ທ້າວ ພຸວິໄລ ຍົມມະລາດ	17/05/2022
				1	ຍິງ	Taekwondo-Kyorugi For Female Under 73kg	ນາງ ທິດາສະຫວັນ ສິດທະຈິດ	18/05/2022

Scanned with CamScanner

7	มวยลาว Muay			1	ຍິງ	Muay-Women's Combat 63.5kg	นาง อีลัดดา บุบผาอัม	19/05/2022
				1	ຍິງ	Muay-Women's Combat 54kg	นาง ลุ สุภาภะเสิม	
				1	ຊาย	Muay-Men's Combat 57kg	ท้าว ไก่ เภดมุอิง	21/05/2022
				1	ຊาย	Muay-Men's Combat 63.5kg	ท้าว บ้อย ธัภสาเมิอง	
8	วูซู Wushu			1	ชาย	Wushu-Men's Sanda 65kg	ท้าว ภิ่งเพัด ฮ่อนพิม	16/05/2022
				1	ยิง	Wushu-Women's Sanda 60kg	นาง คำมาย ลาดสะอิง	
				1	ยิง	Wushu-Women's Sanda 56kg	นาง มิมาอัม อุปะชา	
9	ปันจักสิลัด Pencak Silat			1	ยิง	Pencak Silat-Women's SENI (Artistic) Tunggal (Single)	นาง ปุภาภิ์ สะเลิมบุบผา	10/5/2022
				1	ชาย	Pencak-Silat - Men's TANDING (Match) Class C (55-60kg) Semi Finals	ท้าว จันสะหมอม พิมโสพา	14/5/2022
				1	ชาย	Pencak-Silat - Men's TANDING (Match) Class D (60-65kg) Semi - Finals	ท้าว บิออัม ภูมเพังแก้อ	15/5/2022
10	คิกบอ์กาชิง Kickboxing			1	ชาย	Kickboxing-Men's Full Contact -57kg	ท้าว ทองบาง เสิมพิม	10/5/2022
				1	ชาย	Kickboxing-Men's Low kick -60kg	ท้าว สุภัม ไตปันยาอิง	11/5/2022
11	มวยปล้ำ Wrestling			1	ยิง	Wrestling-Women's Freestyle 76kg	นาง โอใด ลาดชิมพุ	18/5/2022
				1	ชาย	Wrestling-Men's Freestyle 125kg	ท้าว พอนไชุ พะจันไชุ	19/5/2022
12	ยิงปืน Shooting			1	ชาย	Shooting-10m Running Target Team Men	ท้าว สิมจัน ไชุสิมมี ท้าว เพัดดาอัน เพัดสะลาด ท้าว ปาน ดวงปะเสิด	22/5/2022
				1	ยิง	Shooting-10m Running Target Team Women	นาง ติงดำ ไชุยะลาด นาง พุดสะดี พิมมะจัน นาง คำหล้า ไชุยะอิง	21/5/2022

Scanned with CamScanner

13	ເພາະກາຍ Body Building			1	ຊາຍ	Bodybuilding-Lightweight - up to and incl. 70kg	ທ້າວ ພຸດສະຫວັນ ສີສົມພຸ	14/5/2022
14	Tennis			1	ຊາຍ	Tennis-Men's Singles	MICK LESCURE SADETTAN	21/5/2022
15	Boxing			1	ຍິງ	Boxing-Women's 57kg - 60kg	ນາງ ດວງໃຈ ທະເລີນລິດ	20/5/2022
16	Cycling							
17	Athletics							
18	Billiards sports							
19	E-Sports							
20	Archery							
21	Swimming							
22	Football							
23	Gymnastic							
24	Golf							
25	Table Tennis							
26	Weightlifting							
27	Badminton							
28	Beach Volleyball							
	Total :	2	7	33		42		

Scanned with CamScanner

ສະຫຼຸບຫຼຽນລາງວັນ

ໃນການເຂົ້າຮ່ວມການແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 31

ທີ່ ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ ເປັນເຈົ້າພາບ

ວັນທີ 12-23 ພຶດສະພາ 2022

RANKING 9

ລ/ດ	ປະເພດ	ຫຼຽນລາງວັນ			ລວມ
		ຫຼຽນຄຳ	ຫຼຽນເງິນ	ຫຼຽນທອງ	
1	ຫວໍອິນາມ	2	1	3	6
2	ເປຕັ້ງ	0	2	4	6
3	ຢຸ່ໂດ	0	2	2	4
4	ກະຕ່ຳ	0	1	1	2
5	ກາຣາເຕໂດ	0	1	0	1
6	ເທຄວັນໂດ	0	0	4	4
7	ມວຍ	0	0	4	4
8	ປັນຈັກສີລັດ	0	0	3	3
9	ວູຊູ	0	0	3	3
10	ຄິກບ໋ອກຊິ້ງ	0	0	2	2
11	ມວຍປ້ຳ	0	0	2	2
12	ຍິງປືນ	0	0	2	2
13	ເພາະກາຍ	0	0	1	1
14	ມວຍສາກົນ	0	0	1	1
15	ເທັນນິດ	0	0	1	1
16	ແລ່ນ-ລານ	0	0	0	0
17	ລິດຖີບ	0	0	0	0

Scanned with CamScanner

18	ອິສະປອດ	0	0	0	0
19	ຍິງທະນູ	0	0	0	0
20	ບານເຕະ (ຊາຍ-ຍິງ)	0	0	0	0
21	ລອຍນ້ຳ	0	0	0	0
22	ຍິມນາສະຕິກ	0	0	0	0
23	ກອ໊ຟ	0	0	0	0
24	ຍິນລຽດ-ສະນຸກເກີ	0	0	0	0
25	ບານສິ່ງຫາດຊາຍ	0	0	0	0
26	ດອກປີກໄກ່	0	0	0	0
27	ປິ່ງປ່ອງ	0	0	0	0
28	ຍິກນ້ຳໜັກ	0	0	0	0
	ລວມ :	2	7	33	42

Scanned with CamScanner